ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ภนติพาบ เอกะลาด ปะชาทิปะไต เอกะพาบ อัดทะมะถาออม

****

PCD

ເລກທີ ....245..... /ພກພ

ນະຄອນຫລວງວຽງຈັນ, ວັນທີ ....21 AUG 2025....

ໜັງສືຊີ້ແຈງ

ເຖິງ : ທ່ານຜູ້ອຳນວຍການ ບໍລິສັດ ຕະຫລາກຫຼັກຊັບລາວ ຈຳກັດ
ເລື່ອງ: ຊີ້ແຈງເລື່ອງການເພີ້ມຂຶ້ນຂອງລາຄາຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

- ອີງຕາມ: ໜັງສືແຈ້ງ ຂອງ ຕລຊລ ສະບັບເລກທີ: 1192/ຕລຊລ, ລົງວັນທີ: 20/08/2025

ຂ້າພະເຈົ້າ ໃນນາມ ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍຖືເປັນກຽດຊີ້ແຈງໃຫ້ທ່ານຊາບກ່ຽວກັບການເພີ້ມຂຶ້ນຂອງລາຄາຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ດັ່ງນີ້:

1. ໃນຊ່ວງທ້າຍເດືອນ 5/2025 ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ມີການປ່ຽນແປງມູນຄ່າກຳນົດຂອງລາຄາຮຸ້ນ (ແຕກລາຄາພາຣ໌) ຈາກ 1,000 ກີບຕໍ່ຮຸ້ນ ມາເປັນ 200 ກີບຕໍ່ຮຸ້ນ ແລະ ສຳເລັດການປ່ຽນແປງໃນຕົ້ນເດືອນ 6/2025 ແລະ ໃນວັນເປີດຕະຫຼາດຄືນໃຫມ່ ແມ່ນລາຄາ 820 ກີບ (ເມື່ອທຽບກັບລາຄາວັນສຸດທ້າຍປິດຕະຫຼາດ ຊື້-ຂາຍ ຊຶ່ວຄາວແມ່ນຫຼຸດລົງ 5 ເທົ່າ ຄື 4,100 ກີບ ມາເປັນ 820 ກີບ) ຍ້ອນການປ່ຽນແປງດັ່ງກ່າວເຮັດໃຫ້ ການ ຊື້-ຂາຍ ຮຸ້ນມີສະພາບຄ່ອງຍ້ອນນັກລົງທຶນທີ່ມີທຶນໜ້ອຍສາມາດເຂົ້າເຖິງໄດ້ງ່າຍ ແລະ ມີການ ຊື້-ຂາຍ ເພີ້ມຂຶ້ນ.
2. ພກພ ໄດ້ຮັບສຳປະທານ ໂຄງການກໍ່ສ້າງ ແລະ ພັດທະນາ ສະໜາມກ໊ອຟ ພູຊອງ ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ ເປັນເວລາ 30 ປີ ເຊິ່ງໄດ້ເລີ້ມລົງມືຈັດຕັ້ງ ປະຕິບັດ, ຈະສຳເລັດ ແລະ ເປີດການນຳໃຊ້ ໃນປີ 2026.
3. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ 25 %, ເປັນຜູ້ຮັບເໝົາຫຼັກໃນການຂຸດຄົ້ນຖ່ານຫີນເມືອງວຽງພູຄາ, ແຂວງຫຼວງນ້ຳທາ. ມູນຄ່າການລົງທຶນ 5 ໂດລາ ຕໍ່ ໂຕນ, ລາຍຮັບ 12 ໂດລາ ຕໍ່ ໂຕນ (ໄດ້ຈາກກຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານ ໂດລາ)
4. ທາງດ່ວນເລັ່ນເມືອງນະຄອນຫຼວງວຽງຈັນມີຄວາມຍາວກວ່າ 33 ກມ ເຊິ່ງປະຈຸບັນ ເຈົ້າຄອງນະຄອນຫຼວງວຽງຈັນໄດ້ມີຂໍ້ຕົກລົງໃຫ້ ພກພ ສຶກສາ, ສຳຫຼວດ ຄວາມເປັນໄປໄດ້ໃນ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວຈັນ.Tel/Fax: (856-21) 229696; E-mail: info@pcdlao.com ; website: www.pcdlao.com

ການກໍ່ສ້າງຮູບແບບ BOT ແລະ ຂໍ້ຕົກລົງເຊັນ MOU ຮ່ວມກັບ ພະແນກ ແຜນການ-ການ ລົງທຶນ ແລະ ຈະໄດ້ລົງມືກໍ່ສ້າງໃນທ້າຍປີ 2025 ນີ້.

ຍ້ອນຄວາມຄືບໜ້າຂອງໂຄງການທີ່ກ່າວມາຂ້າງເທິງນີ້ເຮັດໃຫ້ນັກລົງທຶນຈຳນວນໜຶ່ງທີ່ຊາບຂ່າວໄດ້ພາກັນເຂົ້າມາເກັບຊື້ຮຸ້ນຂອງ ພກພ ຈຶ່ງເຮັດໃຫ້ລາຄາຮຸ້ນມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ໃນເວລາອັນສັ້ນ ດ້ວຍດັ່ງທີ່ເຫັນໃນປະຈຸບັນນີ້.

ດັ່ງນັ້ນ, ຈຶ່ງຮຽນຊີ້ແຈງມາຍັງທ່ານ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ຈຳກັດ ເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ແພງ ດວງເງິນ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວງຈັນ.Tel/Fax: (856-21) 229696; E-mail: info@pcdlao.com ; website: www.pcdlao.com